ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------------

ສຳນັກງານນາຍົກລັດຖະມົນຕີ　　　　　　　　　　　　　　　　　　　ເລກທີ 155 /ນຍ

# ດຳລັດ

## ວ່າດ້ວຍຊັບພະຍາກອນທຳມະຊາດທີ່ເປັນຢາ

## ( ເພສັດຊັບພະຍາກອນທຳມະຊາດ )

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບ ເລກທີ 01/95/ສພຊ, ລົງວັນທີ 8 ມີນາ 1995;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 01/96, ລົງວັນທີ 11 ຕຸລາ 1996;
- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 01/ສພຊ, ລົງວັນທີ 8 ເມສາ 2000;
- ອີງຕາມ ການສະເໜີຂອງລັດຖະມົນຕີວ່າການກະຊວງສາທາລະນະສຸກ,

## ນາຍົກລັດຖະມົນຕີອອກດຳລັດ

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ມີໜ້າທີ່ກຳນົດລະບຽບຫຼັກການ, ບັນດາມາດຕະການ ກ່ຽວກັບການສົ່ງເສີມ, ຄຸ້ມຄອງ, ການຂຸດຄົ້ນ, ການຜະລິດ, ການປູກ, ການລ້ຽງ ແລະການນຳໃຊ້ຊັບພະຍາກອນທຳມະຊາດທີ່ເປັນຢາ ເພື່ອປົກປັກຮັກສາແຫຼ່ງຊັບພະຍາກອນທຳມະຊາດທີ່ເປັນຢາ, ຄວາມອຸດົມສົມບູນ ຂອງທຳມະຊາດ ແລະ ຮັບປະກັນການນຳໃຊ້ຊັບພະຍາກອນທຳມະຊາດທີ່ເປັນຢາໃຫ້ຍືນຍົງ.

**ມາດຕາ 2. ນິຍາມຄຳສັບຊັບພະຍາກອນທຳມະຊາດທີ່ເປັນຢາ**

1. ຊັບພະຍາກອນທຳມະຊາດທີ່ເປັນຢາ ແມ່ນເພສັດຊັບພະຍາກອນທຳມະຊາດ (Materia Medical Pharma-cognosy/matiere medicale) ຫຼື ວັດຖຸໃດໜຶ່ງທີ່ໄດ້ມາຈາກແຫຼ່ງທຳມະຊາດເຊັ່ນ: ພືດ, ສັດ ແລະ ແຮ່ ຈຳນທີ່ສາມາດໃຊ້ເປັນວັດຖຸດິບເພື່ອຜະລິດເປັນຢາພື້ນເມືອງ ຫຼື ຢາຫຼວງ.

**ມາດຕາ 3. ພັນທະໃນການສົ່ງເສີມ, ຄຸ້ມຄອງ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາ**

ອົງການຈັດຕັ້ງທຸກຂັ້ນຂອງລັດທີ່ກ່ຽວຂ້ອງ ມີໜ້າທີ່ຊີ້ນຳ, ນຳພາ, ຄຸ້ມຄອງ, ສົ່ງເສີມການປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາ, ການປູກຕົ້ນໄມ້ເປັນຢາ ແລະ ການລ້ຽງສັດທີ່ເປັນຢາ ດ້ວຍການເຜີຍແຜ່ຂໍ້ມູນຂ່າວສານ, ສຶກສາອົບຮົມໃຫ້ປະຊາຊົນເຫັນໄດ້ຄວາມສຳຄັນ, ຄຸນຄ່າຂອງຊັບພະຍາກອນທຳມະຊາດ ທີ່ເປັນຢາໃນການຮັກສາສຸຂະພາບຂອງປະຊາຊົນ ແລະການພັດທະນາເສດຖະກິດຂອງຊາດ ແລະ ຜົນປະ ໂຫຍດທີ່ພົນລະເມືອງຈະໄດ້ຮັບຈາກການເອົາໃຈໃສ່ອະນຸລັກຮັກສາ ແລະ ຄຸ້ມຄອງຊັບພະຍາກອນທຳມະ ຊາດທີ່ເປັນຢາ.

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ທີ່ໄດ້ຮັບອະນຸຍາດດຳເນີນ ທຸລະກິດ ແລະ ຜະລິດຢາຈາກ ຊັບພະຍາກອນທຳມະຊາດທີ່ເປັນຢາ ມີພັນທະປົກປັກຮັກສາແຫຼ່ງຊັບພະຍາ ກອນດັ່ງກ່າວ, ມີໜ້າທີ່ປູກ ແລະ ລ້ຽງທົດແທນ ເພື່ອບໍ່ໃຫ້ມີການບົກແຫ້ງ.

**ມາດຕາ 4. ຫຼັກການພື້ນຖານກ່ຽວກັບການສົ່ງເສີມການນຳໃຊ້ ການຄຸ້ມຄອງ ການປົກປັກຮັກສາ ແລະ ການປູກລ້ຽງ ຊັບພະຍາກອນທຳມະຊາດທີ່ເປັນຢາ**

ຫຼັກການພື້ນຖານກ່ຽວກັບການສົ່ງເສີມ, ການຄຸ້ມຄອງ ແລະ ການປົກປັກຮັກສາຊັບພະຍາ

ກອນທຳມະຊາດທີ່ເປັນຢາມີຄື:

1. ເອົາການຄຸ້ມຄອງ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາເປັນວຽກງານຕົ້ນຕໍ, ເອົາວຽກງານປູກລ້ຽງທົດແທນຄືນເປັນວຽກງານສຳຄັນ;
2. ການຂຸດຄົ້ນຊັບພະຍາກອນທຳມະຊາດທີ່ເປັນຢາ ທີ່ຕິດພັນກັບການສຶກສາຄົ້ນຄວ້າ, ການຜະລິດຢາພື້ນ ເມືອງ ແລະ ຢາຫຼວງຕ້ອງມີແຜນການຄຸ້ມຄອງ ແລະ ປົກປັກຮັກສາ;
3. ບຸກຄົນ, ອົງການຈັດຕັ້ງຢູ່ໃນ ສ.ປ.ປ.ລາວ ແລະ ພາກສ່ວນນຳໃຊ້ທີ່ໄດ້ຮັບຜົນປະໂຫຍດ ມີໜ້າທີ່ປົກປັກຮັກສາ ແຫຼ່ງຊັບພະຍາກອນທຳມະຊາດທີ່ເປັນຢາຂອງຊາດ;
4. ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ກໍ່ຄວາມເສຍຫາຍຕໍ່ຊັບພະຍາກອນທຳມະຊາດທີ່ເປັນຢາ ແລະ ແຫຼ່ງເພສັດຊັບພະຍາກອນຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ;
5. ຕ້ອງນຳໃຊ້ຊັບພະຍາກອນທຳມະຊາດທີ່ເປັນຢາຢ່າງມີແຜນການ ແລະ ມີປະສິດທິຜົນເພື່ອການພັດທະ ນາຊີວະນາງພັນແບບຍືນຍົງ.

**ມາດຕາ 5. ການພົວພັນ ແລະ ການຮ່ວມມືສາກົນ**

ລັດສົ່ງເສີມການພົວພັນ ແລະ ການຮ່ວມມືສາກົນ ເພື່ອການລົງທຶນ, ແລກປ່ຽນບົດຮຽນ, ພັດ ທະນາຊັບພະຍາກອນມະນຸດ ແລະ ອື່ນໆ ບົນພື້ນຖານແນວທາງນະໂຍບາຍຂອງພັກ ແລະ ລັດໃນການຈັດຕັ້ງປະຕິບັດ ການປົກປັກຮັກສາ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດທີ່ເປັນຢາ.

## ໝວດທີ II
## ການຄຸ້ມຄອງ, ການປົກປັກຮັກສາ,
## ການຂຸດຄົ້ນ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດທີ່ເປັນຢາ

**ມາດຕາ 6. ການຂຸດຄົ້ນຊັບພະຍາກອນທຳມະຊາດທີ່ເປັນຢາ**

ການຂຸດຄົ້ນ, ເກັບກູ້ ເພສັດຊັບພະຍາກອນທຳມະຊາດທີ່ເປັນຢາຕ້ອງມີວິທີການ ແລະ ນຳໃຊ້ເຕັກນິກທີ່ເໝາະສົມ ພ້ອມທັງຖືກລະດູການ ຊຶ່ງມີຜົນກະທົບໜ້ອຍທີ່ສຸດຕໍ່ການຂະຫຍາຍພັນຂອງພືດ ແລະ ສັດເພື່ອການຍືນຍົງຄົງຕົວຂອງແຫຼ່ງຊັບພະຍາກອນທຳມະຊາດທີ່ເປັນຢາ.

**ມາດຕາ 7. ການຈັດປະເພດ ແລະ ຊະນິດ ຊັບພະຍາກອນທຳມະຊາດທີ່ເປັນຢາ** ຊັບພະຍາກອນທຳມະຊາດທີ່ເປັນຢາ

ຖືກຈັດປະເພດ ແລະ ຊະນິດດັ່ງຕໍ່ໄປນີ້:

1. ພືດ, ສັດ ແລະ ແຮ່ຈ່ານທີ່ເປັນຢາຊຶ່ງຫາໄດ້ຍາກໃນທຳມະຊາດ ແລະ ມີທ່າອ່ຽງຈະສູນພັນໄດ້ກຳນົດໄວ້ໃນບັນຊີໝວດທີ I;
2. ພືດ, ສັດ ແລະແຮ່ຈ່ານທີ່ເປັນຢາຊຶ່ງເປັນທ່າແຮງທາງດ້ານເສດຖະກິດ, ສາມາດຜະລິດເປັນສິນ ຄ້າຮັບໃຊ້ພາຍໃນ ແລະ ເຮັດຂາອອກ ໄດ້ກຳນົດໃນບັນຊີໝວດທີ II;
3. ພືດ, ສັດ ແລະ ແຮ່ຈ່ານທີ່ເປັນຢາ ຊຶ່ງມີລັກສະນະແຜ່ຫຼາຍໃນທຳມະຊາດ ໄດ້ກຳນົດໄວ້ໃນໝວດທີ III;

**ມາດຕາ 8. ການຄຸ້ມຄອງ ແລະ ການອະນຸຍາດ ການຂຸດຄົ້ນຊັບພະຍາກອນທຳມະຊາດທີ່ເປັນຢາ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນການຂຸດຄົ້ນ, ການລ່າສັດທີ່ເປັນຢາ, ການຂົນສົ່ງ, ການເກັບຮັກ ສາ, ການປຸງແຕ່ງ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດທີ່ເປັນຢາຕ້ອງໄດ້ຮັບອະນຸຍາດຈາກພາກ ສ່ວນທີ່ກ່ຽວຂ້ອງ ແລະຕ້ອງປະຕິບັດຕາມກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ, ກົດໝາຍປ່າ ໄມ້, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແລະລະບຽບການອື່ນໆ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ:

1. ການເກັບກູ້, ການຂຸດຄົ້ນພືດພັນ ແລະ ການລ່າສັດທີ່ເປັນຢາ ຊຶ່ງໄດ້ກຳນົດໄວ້ໃນບັນຊີໝວດທີ I ຕ້ອງ ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ແລະ ພາກສ່ວນທີ່ກ່ຽວຂ້ອງ;

2. ການເກັບກູ້, ການຂຸດຄົ້ນພືດພັນ ແລະ ການລ່າສັດທີ່ເປັນຢາ ຊຶ່ງໄດ້ກຳນົດໄວ້ໃນບັນຊີໝວດທີ II ຕ້ອງໄດ້ສ້າງແຜນການເກັບກູ້ ແລະ ປູກລ້ຽງແທນ ຊຶ່ງແຜນການດັ່ງກ່າວຕ້ອງໄດ້ຮັບອະນຸມັດ ຈາກກະຊວງສາທາລະນະສຸກ ແລະ ພາກສ່ວນທີ່ກ່ຽວຂ້ອງ;
3. ການເກັບກູ້, ການຂຸດຄົ້ນພືດພັນ ແລະ ສັດທີ່ເປັນຢາ ໄດ້ກຳນົດໄວ້ໃນບັນຊີໝວດທີ III ຕ້ອງປະຕິບັດຕາມຫຼັກການ ແລະ ລະບຽບການທີ່ກະຊວງສາທາລະນະສຸກ ແລະ ພາກສ່ວນກ່ຽວ ຂ້ອງວາງອອກ;
4. ທຸກການນຳເຂົ້າ ແລະ ສົ່ງອອກຊະນິດແນວພັນພືດ, ສັດ, ແມງໄມ້, ຈຸລິນຊີ ແລະ ແຮ່ຈ່ານທີ່ປັນຢາຕ່າງໆ ຕ້ອງປະຕິບັດຕາມລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງເພສັດຊັບພະຍາກອນ ຢ່າງເຂັ້ມງວດ. ທຸກໆຊະນິດຢາທີ່ຈະສົ່ງອອກຕ້ອງມີການປູກລ້ຽງທົດແທນ, ຖ້າວ່າບໍ່ມີການປູກລ້ຽງທົດແທນຈະບໍ່ອະນຸຍາດໃຫ້ສົ່ງອອກ;
5. ລັດສົ່ງເສີມປະຊາຊົນບັນດາເຜົ່າລົງທຶນໃນການປູກພືດ ແລະ ລ້ຽງສັດທີ່ເປັນຢາເພື່ອເປັນເສດຖະກິດສິນ ຄ້າພາຍໃນ ຫຼື ສົ່ງອອກ ແລະ ເປັນອາຊີບທົດແທນການປູກຝິ່ນ ແລະ ຢຸດຕິການຖາງປ່າເຮັດໄຮ່;
6. ລັດສະຫງວນລິຂະສິດຕໍ່ທຸກໆຊະນິດຊັບພະຍາກອນທຳມະຊາດທີ່ເປັນຢາ ແລະ ພູມປັນຍາດັ້ງເດີມຂອງ ຊາດ, ນັບທັງຜົນສຳເລັດຂອງການຄົ້ນຄວ້າວິທະຍາສາດ ຕໍ່ເປົ້າໝາຍດັ່ງກ່າວທັງຢູ່ພາຍໃນ ແລະ ຕ່າງ ປະເທດ.

**ມາດຕາ 9. ພັນທະກ່ຽວກັບການຂຸດຄົ້ນຊັບພະຍາກອນທຳມະຊາດທີ່ເປັນຢາ**

ບຸກຄົນ ແລະ ການຈັດຕັ້ງທີ່ໄດ້ຮັບອະນຸຍາດຂຸດຄົ້ນ ຫຼື ເກັບກູ້ພືດພັນ ແລະ ລ່າສັດທີ່ເປັນຢາ ເພື່ອນຳໃຊ້ເຂົ້າໃນການຜະລິດ ແລະ ຈຳໜ່າຍ ທັງຢູ່ພາຍໃນ ແລະ ຕ່າງປະເທດຕ້ອງປະຕິບັດພັນທະ ຕາມການຕົກລົງຂອງອົງການທີ່ອອກອະນຸຍາດ ເພື່ອປະກອບສ່ວນເຂົ້າໃນການບູລະນະແລະ ຟື້ນຟູລະບົບນິເວດວິທະຍາ.

## ໝວດທີ III

## ອົງການຄຸ້ມຄອງ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາ

**ມາດຕາ 10. ອົງການຄຸ້ມຄອງ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາ**

ອົງການຄຸ້ມຄອງ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາປະກອບດ້ວຍອົງການຄຸ້ມຄອງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ:

ກ. ອົງການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ເປັນຢາ ມະຫາພາກຂັ້ນສູນກາງ ແມ່ນກະຊວງສາທາລະ ນະສຸກ ຊຶ່ງມີໜ້າທີ່:

1. ວາງລະບຽບການ ແລະມາດຕະການກ່ຽວກັບການຄຸ້ມຄອງ, ການຂຸດຄົ້ນ, ການນຳໃຊ້ ແລະປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາ;
2. ກວດກາການຂຸດຄົ້ນ ແລະການໃຊ້ແຫຼ່ງຊັບພະຍາກອນທຳມະຊາດທີ່ເປັນຢາ;
3. ຊີ້ນຳການສຳຫຼວດແຫຼ່ງຊັບພະຍາກອນທຳມະຊາດທີ່ເປັນຢາ ເພື່ອດັດແປງ ຫຼື ເພີ່ມເຕີມລາຍຊື່ຊັບ ພະຍາກອນທີ່ເປັນຢາທີ່ຕ້ອງຈົດເຂົ້າໃນບັນຊີອະນຸລັກ ແລະປົກປັກຮັກສາແຫຼ່ງດັ່ງກ່າວ;
4. ຈັດຕັ້ງການຄົ້ນຄວ້າວິທະຍາສາດຢ່າງຕໍ່ເນື່ອງ, ຊອກຄົ້ນຫາທາດທີ່ເປັນຢາ ເພື່ອພັດທະນາການນຳໃຊ້ ແລະ ປຸງແຕ່ງເປັນຢາປົວພະຍາດ;
5. ໃຫ້ຄຳເຫັນແກ່ອົງການທີ່ມີສິດໜ້າທີ່ຕົກລົງ ກ່ຽວກັບການລົງທຶນໃນການຂຸດຄົ້ນ, ຄຸ້ມຄອງຊັບພະຍາ ກອນທຳມະຊາດທີ່ເປັນຢາ;
6. ພົວພັນຮ່ວມມືສາກົນໃນວຽກງານຄຸ້ມຄອງ, ຂຸດຄົ້ນ ແລະ ປົກປັກຮັກສາເພສັດຊັບພະຍາກອນທຳມະ ຊາດ;
7. ພົວພັນປະສານສົມທົບກັບກະຊວງກະສິກຳ ແລະປ່າໄມ້ໃນການຄຸ້ມຄອງ, ຂຸດຄົ້ນ ແລະປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາ, ພົວພັນປະສານສົມທົບກັບກະຊວງການເງິນ ແລະ ຂະແໜງ ການອື່ນໆ ທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງການສົ່ງອອກຊັບພະຍາກອນ ທີ່ເປັນຢາປະເພດຫວງຫ້າມ, ຮີບຮ້ອນສະກັດກັ້ນການສົ່ງອອກທີ່ຜິດກົດໝາຍ;
8. ປະຕິບັດໜ້າທີ່ອື່ນໆ ທີ່ລັດຖະບານມອບໝາຍໃຫ້.

ຂ. ອົງການຄຸ້ມຄອງ ແລະປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາຂັ້ນທ້ອງຖິ່ນ ແມ່ນພະ

ແພນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະເຂດພິເສດຊຶ່ງມີສິດຕົກລົງຕາມນະໂຍບາຍ, ມີໜ້າທີ່:

1. ກຳນົດ ແລະ ຈັດປະເພດ ແລະ ຊະນິດຊັບພະຍາກອນທຳມະຊາດທີ່ເປັນຢາ ທີ່ຫາໄດ້ຍາກ, ມີຄຸນຄ່າທາງດ້ານເສດຖະກິດ ແລະ ແຜ່ຫຼາຍ ເພື່ອປົກປັກຮັກສາ, ພັດທະນາ ແລະ ຂະຫຍາຍແນວພັນ ຊັບພະຍາກອນທຳມະຊາດທີ່ເປັນຢາ;
2. ຄຸ້ມຄອງການຂຸດຄົ້ນ, ການນຳໃຊ້ ແລະ ການອະນຸລັກແຫຼ່ງຊັບພະຍາກອນທຳມະຊາດ ທີ່ເປັນຢາ ໃນຂອບເຂດທ້ອງຖິ່ນຂອງຕົນ;
3. ດຳເນີນການສຳຫຼວດ ແລະ ຂຶ້ນບັນຊີແຫຼ່ງຊັບພະຍາກອນທຳມະຊາດທີ່ເປັນຢາ, ໂດຍສະເພາະຕົ້ນໄມ້ທີ່ເປັນຢາ ຊຶ່ງມີຢູ່ໃນທ້ອງຖິ່ນຂອງຕົນ ແລະເອົາໃຈໃສ່ກ່ຽວກັບຕົ້ນຢາທີ່ມີໜ້ອຍ, ມີທ່າອ່ຽງທີ່ຈະສູນພັນ ຫຼື ມີການເກັບກູ້ເປັນຈຳນວນຫຼາຍ ເພື່ອສະເໜີຈັດເພີ່ມເຂົ້າໃນບັນຊີຂອງຕົ້ນຢາທີ່ຈະຕ້ອງອະ ນຸລັກຮັກສາ;
4. ຈັດຕັ້ງປະຕິບັດລະບຽບການ ແລະ ມາດຕະການທີ່ອີງການຄຸ້ມຄອງ ແລະ ປົກປັກຮັກສາຊັບພະຍາ ກອນທຳມະຊາດທີ່ເປັນຢາ ຂັ້ນສູນກາງວາງອອກ;
5. ໃຫ້ຄຳເຫັນແກ່ອຳນາດການປົກຄອງແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດໃນວຽກງານຄຸ້ມ ຄອງ, ຂຸດຄົ້ນ, ສຳຫຼວດ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາ;
6. ປະສານສົມທົບກັບພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ເຂດພິເສດໃນການເຄື່ອນໄຫວວຽກງານຄຸ້ມຄອງ, ຂຸດຄົ້ນ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາ;
7. ລາຍງານກ່ຽວກັບການຄຸ້ມຄອງ, ຂຸດຄົ້ນ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາ ໃຫ້ອົງການຄຸ້ມຄອງ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາຂັ້ນສູນກາງ ຢ່າງເປັນ ປົກກະຕິ;
8. ປະຕິບັດໜ້າທີ່ອື່ນໆ ທີ່ໄດ້ຮັບມອບໝາຍ.

## ໝວດທີ IV
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 11. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນປົກປັກຮັກສາແຫຼ່ງຊັບພະຍາກອນ ທຳມະຊາດທີ່ເປັນຢາ ຈະໄດ້ຮັບການຍ້ອງຍໍ ຫລື ປະຕິບັດນະໂຍບາຍຕ່າງໆ ຕາມຄວາມເໝາະສົມ.

### ມາດຕາ 12. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫລື ການຈັດຕັ້ງໃດ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ປັບໃໝ ຫລື ດຳເນີນຄະດີຕາມກົດໝາຍອີງຕາມກໍລະນີໜັກ ຫຼື ເບົາ, ລວມທັງການໃຊ້ແທນຄ່າເສຍຫາຍທີ່ເກີດຈາກການລະເມີດນັ້ນ

## ໝວດທີ V
## ບົດບັນຍັດສຸດທ້າຍ

### ມາດຕາ 13. ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງສາທາລະນະສຸກ, ບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 14. ຜົນສັກສິດ

ດຳລັດວ່າດ້ວຍຊັບພະຍາກອນທຳມະຊາດທີ່ເປັນຢາ ສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນ ຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດ ແລະ ລະບຽບການທີ່ຂັດກັບດຳລັດ ສະບັບນີ້ລ້ວນແຕ່ ຖືກຍົກເລີກ.

ນະຄອນຫຼວງວຽງຈັນ, ວັນທີ 30.09.2003

**ນາຍົກລັດຖະມົນຕີແຫ່ງ ສ.ປ.ປ. ລາວ**

ບຸນຍັງ ວໍລະຈິດ

# ບັນຊີຊັບພະຍາກອນທຳມະຊາດທີ່ເປັນຢາ

| ລ/ດ | ຊື່ລາວ | ຊື່ວິທະຍາສາດ ແລະ ສະກຸນ | ໝວດI | ໝວດII | ໝວດIII | ສ່ວນໃຊ້ເຮັດຢາ |
|---|---|---|---|---|---|---|
| | **ສັດລ້ຽງລູກດ້ວຍນ້ຳນົມ** | | | | | |
| 1 | ງົວບາ | Bos sauveli | + | | | ເຂົາ, ກະດູກ |
| 2 | ຊ້າງ | Elephas maximus | + | | | ກະດູກ, ໜັງ |
| 3 | ຄວາຍປ່າ | Bubalus bubalis | + | | | ເຂົາ |
| 4 | ງົວປ່າ | Bos javanicus | + | | | ບີ,ເຂົາ |
| 5 | ເມີຍ | Bos gaurus | + | | | ບີ,ເລັບ,ແຂ້ວ |
| 6 | ເໜືອຍ | Helarctors malayanus | + | | | ບີ,ເລັບ,ແຂ້ວ |
| 7 | ໝີດຳ | Selenarctos thibetanus | + | | | ບີ,ເລັບ,ແຂ້ວ |
| 8 | ໂອງ, ມັງ | Cervus eldi | + | | | ເຂົາ |
| 9 | ເຍືອງຜາ | Nemorhedus caudatus | + | | | ເລືອດ,ເຂົາ,ກະດູກ,ບີ |
| 10 | ຂາແດງ | Pygathix nemaeue | + | | | ໂພ່ນ |
| 11 | ທະນີທຸກຊະນິດ | Hylobates sp | + | | | ໂພ່ນ, ກະດູກ |
| 12 | ຄ່າງ (ໂຄງ) | Presbytes franciosis | + | | | ໂພ່ນ, ກະດູກ |
| 13 | ຕະລຸງ | Presbytes cristatus | + | | | ໂພ່ນ, ກະດູກ |
| 14 | ຟານດົງ | Megamuntiacus vuquangensis | + | | | ເຂົາ |
| 15 | ໝາປ່າ | Cuon alpinus | + | | | ແຂ້ວ,ບີ |
| 16 | ກະທິງ | Rhinoceros ulsicornis | + | | | ເຂົາ,ກະດູກ,ບີ |
| 17 | ກວາງ | Cervus unicolor | + | | | ເຂົາ |
| 18 | ໄກ້ | Tragulus javanicus | + | | | ເຂົາ |
| 19 | ໝູປ່າ | | | + | | ກະດູກ,ແຂ້ວ,ຄາງກະໄຕ |
| 20 | ລີງ | Macaca sp | | + | | ໂພ່ນ, ສະໝອງ |
| 21 | ລີງລົມ | Nicticebus coucang | | + | | ໜັງ,ຂົນ |
| 22 | ເຍືອງ | Capricornis sumatrensis | + | | | ນ້ຳມັນ, ເຂົາ |
| 23 | ໝາລື່ງ | Melogale personata | | + | | ນ້ຳມັນ |
| 24 | ໝູລື່ງ | Arctonyx collaris | | + | | ນ້ຳມັນ |
| 25 | ສິງ | Panthera leo | + | | | ບີ,ກະດູກ,ແຂ້ວ |
| 26 | ເສືອລາຍເມກ | Neofelis nebalosa | + | | | ໝົດໂຕ |
| 27 | ເສືອໄຟ | Felis temmincki | + | | | ໝົດໂຕ |
| 28 | ເສືອປ່າ | Felis viverrina | + | | | ໝົດໂຕ |
| 29 | ເສືອໂຄ່ງ | Pnthera tigris L | + | | | ໝົດໂຕ |
| 30 | ເສືອດາວ | Panthera pardus | + | | | ຂົນ,ແຂ້ວ,ເລັບ |
| 31 | ແຮດ | Rhinoceros unicornis L | + | | | ໝົດໂຕ |
| | **ສັດປີກ** | | | | | |
| 1 | ໄກ່ປ່າ | Gallus gallus | | + | | ເດືອຍ |
| 2 | ໄກ່ຂວາ | Lophura nycthemera | + | | | ເດືອຍ |
| 3 | ໄກ່ດຳ | | | + | | ໝົດໂຕ |
| 4 | ກາດຳ | | | + | | ກະດູກ,ໝົດໂຕ |
| 5 | ນົກຍູງ | Pavo muticus | + | | | ຂົນ, ບີ, ກະດູກ |
| 6 | ນົກທິງ | Pelecanus philipensis | + | | | ຂົນ, ສົບ |
| 7 | ນົກສາລິກາ | Gracula religioss | + | | | ບີ,ກະດູກ |
| 8 | ນົກເປັດກ່າປີກຂາວ | Cairina scutulata | + | | | ນ້ຳມັນ |
| 9 | ນົກແອ່ນ | | | + | | ຮັງ |
| 10 | ນົກກອງກອດ | Polyplectron bicalearatum | + | | | ສົບ,ເດືອຍ |
| 11 | ນົກກາຮີງ | | | + | | ໝົດໂຕ |

| | | | | | | |
|---|---|---|---|---|---|---|
| 12 | ນົກກົກ | Buceros bicornis | + | | | ສົບ |
| 13 | ນົກກາໄຊ | | | + | | ໝົດໂຕ |
| 14 | ເຜີ້ງ | | | | + | ນ້ຳ,ຮັງ |
| 15 | ເຈຍ | | | | + | ຂີ້ເຈຍ |
| 16 | ຕໍ່ | | | | + | ຮັງ |
| 17 | ຂີ້ສູດ | | | | + | ຮັງ |
| 18 | ແຮ້ງ | Sarcogyps calvas | | + | | ກະດູກ |
| 19 | ແຫຼວ | Fam:Accipitridac | | + | | ກະດູກ,ເລັບ,ສົບ |
| 20 | ຮຸ້ງ | | + | | | ກະດູກ,ເລັບ,ສົບ |
| | **ສັດເລືອຄານ** | | | | | |
| 1 | ແຂ້ | Crocodylus siamensis | + | | | ແຂ້ວ,ບີ |
| 2 | ເຕົ່າ | Chinemys reevesii | | + | | ກະດູກ,ອອງ,ເອິກ |
| 3 | ງູເຫຼືອມ | Python reticulatus | + | | | ປ້ອງຄໍ,ດູກ,ບີ |
| 4 | ງູຫລາມ | Python molurus | + | | | ປ້ອງຄໍ,ກະດູກ,ບີ |
| 5 | ງູຈົງອາງ | Ophiophgus hannah | + | | | ໝົດໂຕ |
| 6 | ງູເຫົ່າ | | + | | | ໝົດໂຕ |
| 7 | ເໝັ້ນ | Hystrix hodgsoni | + | | | ໂພ່ນ,ບີ,ກະດູກ |
| 8 | ລິ່ນ | Manis pentadactyla | + | | | ເກັດ |
| 9 | ບ່າງລົ້ວ | Hylopetes lepidus | | + | | ກະດູກ,ໂພ່ນ |
| 10 | ກັບແກ້ | Gekko gekko L | | | + | ໝົດໂຕ |
| 11 | ແລນ | Vanarus salvator | | + | | ນ້ຳມັນ |
| 12 | ຈອນຟອນ | | | + | | ກະດູກ,ແຂ້ວ |
| 13 | ອົ້ນ | Rhizomys sp | | + | | ເລືອດ |
| 14 | ຫງອນ | | | + | | ໂພ່ນ,ຂົນ,ກະດູກ |
| 15 | ກະຫ້າງ | Calotes sp | | + | | ດູກ,  ຄາງກະໄຕ |
| | **ປາ** | | | | | |
| 1 | ປາຂ່າ | Orcaella brevirostris | + | | | ບີ,  ນ້ຳມັນ |
| 2 | ປາຝາ | Carapax amydae | | + | | ບີ,ກະດູກ,ເອິກ,ອອງ |
| 3 | ປາຝາໄລ | Himantura chaophraya | | + | | ໄລ,ບີ |
| 4 | ຫອນເງືອກ(ປະກາລັງ) | | | + | | ຫອນ |
| 5 | ປາບຶກ | Pagasianodom gigas Chevey | | + | | ບີ,  ນ້ຳມັນ  ,ກະດູກ |
| 6 | ປາໝູໝາດ | | | + | | ບີ,  ນ້ຳມັນ  ,ກະດູກ |
| 7 | ປາແຂ້ | | | + | | ບີ,  ນ້ຳມັນ  ,ກະດູກ |
| 8 | ປາຄໍ່ | | | | + | ບີ |
| 9 | ປາຄໍ່ກັ້ງ | | | + | | ໝົດໂຕ |
| 10 | ປາກວານ | | | + | | ບີ,  ກະດູກ |
| 11 | ປາຊວຍ | | | + | | ນ້ຳມັນ |
| | **ພືດ** | | | | | |
| 1 | ກູດຕີນຮຸ້ງ | Boerhaavia repens L.C36 | + | | | ຮາກ |
| 2 | ກົງສະເດັນ | Croton sp | | + | | ໝົດຕົ້ນ |
| 3 | ເກດສະໜາ | Aquilaria agallocha Pierre | + | | | ໝົດຕົ້ນ |
| 4 | ເກື້ອມ | Canarium kerrii CRAIB A | | | + | ໝາກ,ຢາງ |
| 5 | ແກ້ວຮາກຫອມ | Alyxia divaricataPIT | | | + | ຮາກ |
| 6 | ກອກດ່ອນ | Spondias sp | | | + | ເປືອກ |
| 7 | ກອຍ | Dioscorea hispida Venn | | | + | ຫົວ |
| 8 | ກະຊາຍ  (ຫວ້ານ) | Boesenbergia rotunda (L.) Mansf | | | + | ຫົວ |
| 9 | ເກືອ | Diospyros mollis Griff | | + | | ຫມາກ |

| | | | | | | |
|---|---|---|---|---|---|---|
| 10 | ກະທື (ຫວ້າ ) | Zingiber zerumbet (Linn.) Smith | | | + | ຫົວ |
| 11 | ຂົມລະຫວານຈົ້ | Evodia lepta (Spreng) Merr | + | | | ຫມົດຕົ້ນ |
| 12 | ຂີ້ຫມີ້ນຕົ້ນ | Careya herbacea Roxb | | + | | ລຳຕົ້ນ |
| 13 | ຂີງແຄງປາກັ້ງ | Homalomena aromatica Schott | | | + | ເຫງົ້າຫົວ |
| 14 | ເຂົາຮໍ (ເຄືອ) | Tinospora crispa MIERS | | | + | ເຄືອ |
| 15 | ຂະຍອມພູ | Rauwolfia serpentina Benth | | | + | ຮາກ |
| 16 | ຂະຍອມພູ | R. verticillata (Lour.) Baill | | | + | ຮາກ |
| 17 | ຂີງຜາ | Zingiber sp | | | + | ຫົວ |
| 18 | ເຂົ້າຫລາມດົງ | Goniothalamus saigonensis P | | | + | ລຳຕົ້ນ |
| 19 | ແຄ່ຫອມ | Cinnamomum zeylanicum Nees | | + | | ເປືອກ,ໃບ |
| 20 | ແຄ່ຫມູ່ | Cinnamomum obtusifolium Nees | | | + | ເປືອກ,ໃບ |
| 21 | ແຄ່ເຜັດ | Cinnamomum sp | | | + | ເປືອກ,ໃບ |
| 22 | ເຄັງ (ໄມ້) | Dialium cochinchinense P | | | + | ລຳຕົ້ນ |
| 23 | ຈີ່ນາຍກ້ອມ | Adenosma capitatum Benth | | | + | ໃບ,ລຳ |
| 24 | ຈັນຈູມ | Amomum aromaticum Roxb | | | + | ໝາກ |
| 25 | ຈັນໄດ | Dracaena cambodiana P | | | + | ແກນ |
| 26 | ຈອງບາ | Sterculia lychnophora HANCE | | | + | ໝາກ |
| 27 | ຈັນບາ | Illicium verum Hook. F | | + | | ລຳຕົ້ນ,ດອກ,ໝາກ |
| 28 | ຈັນແດງ | Pterocarpus indicus L | | + | | ແກນຕົ້ນ |
| 29 | ສົ້ມມໍ | Terminalia chebula Retz | | | + | ໝາກ |
| 30 | ແສງເບື່ອ | Strychnos nux vomica L | | | + | ແກ່ນ |
| 31 | ແສງຄຳຕົ້ນ | Terminalia nigrovenulosa P | | + | | ເປືອກຕົ້ນ |
| 32 | ສົ້ມຂີ້ມອນ | Embelia ribes Burm | | | + | ຫມາກ |
| 33 | ໄສ້ໄກ່(ເຄືອ) | Morinda officinalis F.C. | | | + | ເຄືອ |
| 34 | ສ່ອງຟ້າ | Clausena harmandiana P | | + | | ໃບ |
| 35 | ສີໄຄຕົ້ນ | Litseea cubeba (Lour.) Pers | | + | | ລຳ, ນ້ຳມັກຈາກຕົ້ນ |
| 36 | ໄສ້ຊ້າງ | Bauhinia sp | | + | | ເຄືອ |
| 37 | ສະລີປີ | Piper retrofractum Wall | | + | | ຫມາກ,ເຄືອ |
| 38 | ຊາງຈີງ | Dendrocalamus strictus Nees | + | | | ລຳຕົ້ນ |
| 39 | ຊັນຊີ | Zingiber sp. | | | + | ຫົວ |
| 40 | ຊ້າປ່າ | Helicteres hirsuta Lour | | | + | ເປືອກ |
| 41 | ຊາຍນອນດຽວ | Pyrrhosia lingua (Thunb.) | | | + | ເຫົ້ງາຮາກ |
| 42 | ຊີມ (ເຄືອ) | Streptocaulon tomentosum W | | | + | ຮາກ,ເຄືອ |
| 43 | ຊ້າ | Shorea falcata J.E. | | | + | ລຳ,ຮາກ |
| 44 | ຊ້າຈວງ | Cinnamomum cassia BL | | | + | ເປືອກ,ໃບ |
| 45 | ຍາ (ກົກ) | Styrax tonkinense P | | | + | ຢາງ |
| 46 | ຢາງບົງ | Nothaphoebe umbelliflora Bl | | | + | ເປືອກ |
| 47 | ຢີກບໍ່ຖອງ | Eurycoma longifolia Jack | | | + | ລຳ,ຮາກ |
| 48 | ຍໍປ່າ | Morinda tinctoria Roxb | | | + | ລຳ,ໃບ |
| 49 | ຍາງ (ຕົ້ນ) | Hopea hainanensis Merr | | | + | ເປືອກຕົ້ນ |
| 50 | ດອກເຜີ້ງ | Saccolabium albolineatum Teysm | | | + | ໝົດຕົ້ນ |
| 51 | ແດງດ່ານ (ເຄືອ) | Sargentodoxa cuneata (Oliv) Rehd | | + | | ຮາກ,ເຄືອ |
| 52 | ດູ່ເລືອດ | Pterocarpus macrocarpus Kurz | + | | | ເປືອກຕົ້ນ |
| 53 | ຕູມກາແດງ | Strychnos sp | + | | | ໝາກ, ແກນຕົ້ນ |
| 54 | ຕູມ (ຫມາກ) | Aegle marmelos Corr | | | + | ໝາກ |
| 55 | ຕ່ອມເງີນ | Stephania rotunda Lour | | | + | ຫົວ |
| 56 | ຕີນຈຳ | Ardisia silvestris Pit | | + | | ຮາກ ,ລຳ |

| | | | | | | |
|---|---|---|---|---|---|---|
| 57 | ຕີນເປັດ | Alstonia scholaris L | | | + | ໝົດຕົ້ນ |
| 58 | ຖົ່ມ | Adenia cordifolia (Willd) Hook | | | + | ລຳຕົ້ນ |
| 59 | ເຫົ້າສານ | Rhapis laosensis Becc | | | + | ລຳ,ຮາກ |
| 60 | ຫຽນດຳ | Abronia angusta | | | + | ແກ່ນໝາກ,ລຳຕົ້ນ |
| 61 | ນົມຜາ | Stalactite/stalacmite | | | + | ນົມຕິດຜາ |
| 62 | ນ້ຳເຕົ້ານ້ອຍ | Polyalthia suberosa Benth.Hook | | | + | ລຳ,ຮາກ |
| 63 | ເບເບລີນ | Mahonia nepalensis D C | + | | | ຮາກ |
| 64 | ບີຄົນ | Brucea sumatrana Roxb | | | + | ລຳຕົ້ນ |
| 65 | ເປົ້າເລືອດ | Croton robustus Kurz | | + | | ລຳ |
| 66 | ປະດົງເລືອດ | Dalbergia bariensis P | | + | | ເຄືອ |
| 67 | ປໍສາ | Broussonetia papyriferaVent | | | + | ເປືອກ |
| 68 | ຜ່າສາມ | Flacourtia montana Grah | | | + | ລຳຕົ້ນ |
| 69 | ຝິນແສນຫາ | Stixis scandens Lour | | + | | ລຳຕົ້ນ |
| 70 | ຝາງແດງ | Caesalpinia sappan Linn | + | | | ແກນຕົ້ນ |
| 71 | ພັງຄີ | Croton tomentosus Mull | | | + | ຮາກ |
| 72 | ຟອດຟາວ | Gouania leptostachya D C | | | + | ຫມົດເຄືອ |
| 73 | ມັນອ້ອນລີງ | Polygonum multiflorum Thunb | | | + | ຫົວ |
| 74 | ມັນຂາໄກ່ | Codonopsis sp | | | + | ຫົວ |
| 75 | ໄມ້ໂລງເລງ | Fokienia hodginsii (Dunn.) A. Henry et Thomas | | | + | ໝົດຕົ້ນ |
| 76 | ມູກໃຫຍ່ | Holarrhena antidysenterica Wall | | | + | ເປືອກຕົ້ນ |
| 77 | ມ່ວງກະສໍ | Mangifera sp | | + | | ເປືອກ |
| 78 | ມ້ອຍເລືອດ | Gnetum latifolium BL | | | + | ເຄືອ |
| 79 | ມອນກາ | Caesalpinia rhombifolia J.E | | + | | ລຳຕົ້ນ |
| 80 | ມຸ້ງກະຕ່າຍ | Oldenlandia capitellata O.Kze | | + | | ຫມົດຕົ້ນ |
| 81 | ຢານາງແດງ | Limacia sp | | + | | ຮາກ,ເຄືອ |
| 82 | ຢາຫົວ | Smilax glabra Roxb | | | + | ຫົວ |
| 83 | ເລັບມືນາງ | Schefflera elliptic Harms | | | + | ເປືອກ,ລຳ |
| 84 | ເລັບມືນາງໜາມ | Acanthopanax gracilistrylus W.W. Smitl | + | | | ເປືອກ |
| 85 | ເລັບຮຸ້ງ | Celtis sp | | + | | ເຄືອ |
| 86 | ຫົວສາມສິບ | Stemona tuberosa Lour | | | + | ຫົວ |
| 87 | ຫວ້ານລາຍ | Anoectochilus formosusHayana | + | | | ໝົດຕົ້ນ |
| 88 | ໝາດສ້ອຍ | Leonurus heterophyllus Sweet | | | + | ໃບ,ລຳ |
| 89 | ຫາດມີ້ | Artocarpus lakoocha Roxb | | + | | ແກນຕົ້ນ |
| 90 | ຫມາກແຕກ (ເຄືອ) | Celastrus paniculata Willd | | + | | ຮາກ,ເຄືອ |
| 91 | ແໜ່ງ | Amomum ovoideum P | | + | | ໝາກ,ຮາກ |
| 92 | ເໝືອດຄົນ | Scleropyrum wallichianum Arnott | | | + | ລຳຕົ້ນ |
| 93 | ອຽນດ່ອນ | Osbeckia chinensis L | | + | | ຮາກ |
| 94 | ອ້ອຍສາມສວນ | Streptocaulon extensum Wight | | | + | ເຄືອ |
| 95 | ຮີ້ງຂາວ | Taxus sp | | + | | ລຳຕົ້ນ |
| 96 | ແຮມ (ເຄືອ) | Coscinium usitatum P | | + | | ເຄືອ |